## • ທີ່ຕັ້ງ ແລະ ພາລະບົດບາດຂອງ ທລຍ

ກອງທຶນຫຼຸດຜ່ອນຄວາມທຸກຍາກ ຊື່ເອີ້ນຫຍໍ້ວ່າ “ທລຍ” ແມ່ນການຈັດຕັ້ງໜຶ່ງພາຍໃຕ້ຄວາມພະຍາຍາມຂອງລັດຖະບານ ເພື່ອໃຫ້ເປັນໂຄງການລິເລີ່ມຂອງລັດຖະບານເພື່ອປະກອບສ່ວນເຂົ້າໃນວຽກງານລຶບລ້າງຄວາມທຸກຍາກຂອງປະຊາຊົນລາວບັນດາເຜົ່າ ຈົນກ້າວເຖິງການຫຼຸດພົ້ນອອກຈາກຄວາມທຸກຍາກໃນຂອບເຂດທົ່ວປະເທດ ທັງເປັນການຜັນຂະຫຍາຍມະຕິຂອງພັກ ແລະ ລັດຖະບານ ໂດຍການກະຈາຍອຳນາດລົງສູ່ທ້ອງຖິ່ນ ເປັນຕົ້ນແມ່ນການມີສ່ວນຮ່ວມຂອງປະຊາຊົນໃນການຕັດສິນໃຈຕໍ່ການພັດທະນາຢູ່ທ້ອງຖິ່ນຂອງເຂົາເຈົ້າ, ທັງເປັນການປະຕິບັດພັນທະສາກົນຂອງຕົນໃນການປະກອບສ່ວນເຂົ້າ ໃນການຈັດຕັ້ງປະຕິບັດຄາດໝາຍສະຫັດສະຫວັດ ເພື່ອການພັດທະນາໃນປີ 2015, ພ້ອມທັງປະກອບເຂົ້າໃນວຽກງານ“ຍຸດທະສາດການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ”ເພື່ອເຮັດໃຫ້ປະເທດເຮົາຫຼຸດພົ້ນອອກຈາກສະພາບປະເທດດ້ອຍພັດທະນາ ໃນປີ 2020.

ກອງທຶນຫຼຸດຜ່ອນຄວາມທຸກຍາກ ໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 73/ນຍ, ສະບັບລົງວັນທີ 31 ພຶດສະພາ 2002, ອີງຕາມດຳລັດດັ່ງກ່າວແຕ່ປີ 2003 ຫາ 2006 ທລຍ ເປັນອົງການຈັດຕັ້ງໜຶ່ງທີ່ຂຶ້ນກັບກະຊວງແຜນການ ແລະ ການລົງທຶນ ເພື່ອປະກອບສ່ວນເຂົ້າໃນວຽກງານລຶບລ້າງຄວາມທຸກຍາກ ຕາມກອງປະຊຸມໃຫຍ່ຄັ້ງທີ VII ຂອງສູນກາງພັກ, ຈາກນັ້ນ ໄດ້ມີການດັດແກ້ມາເປັນດຳລັດ ເລກທີ 222/ນຍ ລົງວັນທີ 29 ກັນຍາ 2006 ແລະ ທລຍ 2 ໄດ້ອີງໃສ່ດຳລັດເລກທີ 10/ນຍ, ລົງວັນທີ 10 ມັງກອນ 2012, ອີງຕາມດຳລັດທີ່ໄດ້ດັດແກ້ດັ່ງກ່າວ, ແຕ່ປີ 2007 ຫາ 2016, ທລຍ ເປັນອົງການຈັດຕັ້ງໜຶ່ງທີ່ຂຶ້ນກັບຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ມີຫ້ອງການສູນກາງຢູ່ສຳນັກງານນາຍົກລັດຖະມົນຕີ ແລະ ທລຍ ໄລຍະທີ 3 ແມ່ນອີງຕາມດຳລັດ ເລກທີ 99/ນຍ (ລົງວັນທີ 9 ມີນາ 2017) ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້, ທລຍ ເປັນກົມຈັກທຽບເທົ່າກົມ... 

ກົມຈັກທົ່ວໜ່ວຍວິຊາການລະດັບ 2 ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ນັບແຕ່ປີ 2017 ເປັນຕົ້ນມາ.

## • ພື້ນທີ່ການເຄື່ອນໄຫວວຽກງານ ທລຍ

ທລຍ ໄລຍະ 1: ປີ 2003-2011 (8 ປີ)ໄດ້ເຄື່ອນໄຫວວຽກງານຢູ່ 8 ແຂວງ (ຫຼວງນ້ຳທາ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ,ຈຳປາສັກ, ເຊກອງ ແລະ ອັດຕະປື, ສະເພາະ ແຂວງອັດຕະປືແມ່ນ ເຂົ້າປີ 2011), 28 ເມືອງທຸກຍາກ, 309 ກຸ່ມບ້ານ, 2.185 ບ້ານ ແລະ ກວມເອົາປະຊາກອນຫຼາຍກວ່າ 909.000 ກວ່າຄົນ.

ທລຍ ໄລຍະທີ 2: ແຕ່ປີ 2012-2016 (5 ປີ) ໄດ້ກວມເອົາ 10 ແຂວງ, 42 ເມືອງທຸກຍາກ, 278 ກຸ່ມບ້ານ 1.951 ບ້ານ ແລະ ກວມເອົາປະຊາກອນ ຫຼາຍກວ່າ 891.000 ຄົນ. ແຂວງຈຳປາສັກ ໄດ້ຖືກ ຖອນອອກໃນປີ 2011 ແລະ ເພີ້ມແຂວງ ອຸດົມໄຊ, ຫຼວງພະບາງ ແລະ ຜົ້ງສາລີເຂົ້າຕື່ມໃນປີ 2012.

ທລຍ ໄລຍະ 3: ແຕ່ປີ 2017-2020 (4 ປີ) ໄດ້ກວມເອົາພື້ນທີ່ເປົ້າໝາຍ 10 ແຂວງ, 43 ເມືອງ, 263 ກຸ່ມບ້ານ, 1.820 ບ້ານ ແລະ ກວມເອົາປະຊາກອນຫຼາຍກວ່າ 850.000 ຄົນ.

ສະຫຼຸບລວມ: ປີ 2003 - 2020 ທລຍ ໄດ້ເຄື່ອນໄຫວວຽກງານທັງໝົດຢູ່ 11 ແຂວງຄື: ແຂວງຫຼວງນ້ຳທາ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ,ຈຳປາສັກ, ເຊກອງ, ອັດຕະປື, ອຸດົມໄຊ, ຜົ້ງສາລີ ແລະ ແຂວງຫຼວງພະບາງ. ກວມເອົາ 2.841 ບ້ານ, 413 ກຸ່ມບ້ານ, 55 ເມືອງ, ມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 1.3 ລ້ານຄົນ

ທລຍ 3 ໄລຍະທຶນເພີ່ມຕື່ມ: 2020-2024 (4 ປີ) ໄດ້ກວມເອົາ 12 ເມືອງ, 465 ບ້ານ, 4 ແຂວງ (ຜົ້ງສາລີ, ຫົວພັນ, ອຸດົມໄຊ ແລະ ຊຽງຂວາງ)


**ຄະນະຮັບຜິດຊອບ**

ທ່ານ ນາງ ບົວລີ ໄຊຍະວົງ

ທ່ານ ທົງເງິນ ສະເດັດຕັນ

ທ່ານ ສົມສັກ ຈັນດາລາ

ທ່ານ ແສງເພັດ ວັນນະວົງ

ທ່ານ ປອ. ທັດທະຈັນ ພິມພັນທະວົງ

**ຄະນະບັນນາທິການ**

ທ່ານ ພັດນະຄອນ ຄັນທະມີໄຊ

ທ່ານ ປອ. ວົງປະພັນ ມະນີວົງ

**ອອກແບບ ແລະ ຈັດໜ້າ**

ທ່ານ ແສງອາລຸນ ພິລາຈັນ



**ຕິດຕໍ່ ແລະ ຕິດຕາມພວກເຮົາໄດ້ທີ່:**

ໂທ: 021 261 479 - 80, ອີເມວ: **info@prf.org**

ເວບໄຊ: **www.prflaos.org,** ເຟສບຸກ: **Prf Fund**


THE WORLD BANK
IBRD • IDA

# ກອງທຶນຫຼຸດຜ່ອນຄວາມທຸກຍາກ
# ຈົດໝາຍຂ່າວ

ປະຈຳໄຕມາດ

ກໍລະກົດ - ກັນຍາ
2023

**ມາຈາກຄວາມຕ້ອງການຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ**

**ສາລະບານ**


ຄອບຄົວຕົວແບບໃນການສ້າງລາຍຮັບຈາກການປູກຜັກ
ໜ້າທີ 1-2

ສົ່ງເສີມວຽກງານໂພຊະນາການ ຢູ່ບ້ານນາລວງ
ໜ້າທີ 3

ກິດຈະກຳປັບປຸງຊີວິດການເປັນຢູ່ເພື່ອແກ້ໄຂຄວາມທຸກຍາກ ຢູ່ບ້ານນາກ້າງ
ໜ້າທີ 4 - 5

ການສົ່ງເສີມໂພຊະນາການ ຢູ່ບ້ານກົວວົງວິໄລ, ເມືອງໃໝ່
ໜ້າທີ 6

ສ້າງລາຍຮັບຈາກການລ້ຽງສັດ ເພື່ອປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກ
ໜ້າທີ 7

ຄອບຄົວຕົວແບບຈາກການສ້າງລາຍຮັບຈາກການລ້ຽງສັດ
ໜ້າທີ 8

ທລຍ ເມືອງຄຳ ເຂົ້າຮ່ວມ ວັນໂພຊະນາການ
ໜ້າທີ 9

ການລ້ຽງສັດ ເພື່ອແກ້ໄຂຄວາມທຸກຍາກ ຂອງສະມາຊິກ ກຊກ ບ້ານຫ້ວຍຫຼ້າ
ໜ້າທີ 10

ສຳເລັດການສຳຫຼວດອອກແບບກິດຈະກຳຍ່ອຍພື້ນຖານໂຄງລ່າງຂະໜາດນ້ອຍ ຢູ່ເມືອງຄຳ
ໜ້າທີ 11




## ຄອບຄົວຕົວແບບໃນການສ້າງລາຍຮັບຈາກການປູກຜັກ

ໂດຍ: ຈັນທະໝອນ ສູລິນຄຳ, ວິຊາການປັບປຸງຊີວິດການເປັນຢູ່ ຂັ້ນບ້ານ, ທລຍ ເມືອງຂວາ, ແຂວງຜົ້ງສາລີ

ນາງ ກູດ ແລະ ຄອບຄົວ ອາໄສຢູ່ບ້ານສົນໄຊ, ຂຶ້ນກັບກຸ່ມບ້ານສົນໄຊ, ເມືອງຂວາ, ແຂວງຜົ້ງສາລີ ຊຶ່ງບ້ານດັ່ງກ່າວຫ່າງຈາກຕົວເມືອງຂວາ 36 ກິໂລແມັດ ແລະ ເປັນບ້ານເປົ້າໝາຍຊຸດທີ 1 ຂອງໂຄງການ ທລຍ 3 ໄລຍະເພີ່ມທຶນ. ໃນຄອບຄອບຄົວຂອງລາວ ມີສະມາຊິກທັງໝົດ 5 ຄົນ (ຍິງ 3 ຄົນ) ແລະ ເດັກນ້ອຍອາຍຸ 5 ປີ 1 ຄົນ. ນາງ ກູດ ແລະ ຜົວຂອງລາວ ໄດ້ມີໂອກາດເຂົ້າຮ່ວມຮັບຟັງການແນະນຳກ່ຽວກັບໂຄງການ ທລຍ ໂດຍສະເພາະການສ້າງຕັ້ງກຸ່ມຊ່ວຍເຫຼືອກັນແກ້ໄຂຄວາມທຸກຍາກ (ກຊກ) ແລະ ເຮັດໃຫ້ ນາງ ກູດ ແລະ ຜົວ ມີຄວາມເຂົ້າໃຈເຖິງຈຸດປະສົງຂອງໂຄງການ ທລຍ ທີ່ຈະສະໜັບສະໜູນຊ່ວຍຄອບຄົວທຸກຍາກພາຍໃນບ້ານ ໃຫ້ຫຼຸດພົ້ນຈາກຄວາມທຸກຍາກ. ພາຍຫຼັງ ນາງ ກູດ ໄດ້ກັບໄປເຮືອນ ແລະ ໄດ້ອະທິບາຍສິ່ງທີ່ພວກຕົນເອງໄດ້ຍິນ ແລະ ຟັງຈາກກອງປະຊຸມໃນຄັ້ງນັ້ນ ສູ່ສະມາຊິກຄອບຄົວຟັງ, ພວກເຂົາ ໄດ້ຕັດສິນໃຈສະມັກເປັນສະມາຊິກ ກຊກ. ນັບຕັ້ງແຕ່ເດືອນມັງກອນ ປີ 2021 ນາງ ກູດ ໄດ້ເຂົ້າຮ່ວມກອງປະຊຸມ ກຊກ ຢ່າງເປັນປົກກະຕິ ແລະ ໄດ້ຝາກເງິນກັບກອງທຶນ ກຊກ ແລ້ວ 6 ຄັ້ງ ເປັນ

ເງິນທັງໝົດ 60,000 ກີບ. ນອກຈາກນັ້ນ ພວກເຂົາ ຍັງໄດ້ເຂົ້າຮ່ວມການຝຶກອົບຮົມເຕັກນິກການການປູກ-ການລ້ຽງ. ຫຼັງຈາກນັ້ນ ຄອບຄົວ ນາງ ກູດ ໄດ້ກູ້ຢືມເງິນຈາກກອງທຶນ ກຊກ ຈຳນວນ 5,000,0000 ກີບ ເພື່ອລົງທຶນຊື້ແກ່ນຜັກ ຄື: ແກ່ນໝາກອຶ, ແກ່ນຜັກບົ້ງ, ແກ່ນຜັກກາດຂາວ, ແກ່ນກະລຳປີ, ແກ່ນສາລີຫວານ, ແກ່ນຜັກກາດນາ, ແກ່ນຜັກສະລາດ ແລະ ຊື້ອຸປະກອນເຮັດນ້ຳຢາໄລ່ແມງໄມ້, ນ້ຳຢາບຳລຸງພືດ, ນ້ຳຢາຂ້າເຊື້ອ, ກາກນ້ຳຕານ ແລະ ເຮັດຝຸ່ນບົ່ມ. ຄອບຄົວນາງ ກູດ ສາມາດຂາຍຜັກໄດ້ສະເລ່ຍ 4,500,000 ກີບ ຕໍ່ ເດືອນ ໂດຍສົ່ງຂາຍໃຫ້ຕະຫຼາດປາກນ້ຳນ້ອຍ ແລະ ຕະຫຼາດເມືອງຂວາ. ນອກຈາກນັ້ນ, ຍັງໄດ້ລົງທຶນຊື້ໝູ 3 ໂຕ, ເປັດ 7 ໂຕ, ແລະ ໄກ່ 25 ໂຕ ມາລ້ຽງ ແຕ່ຍັງບໍ່ທັນໄດ້ຂາຍເທື່ອ. ສັງລວມແລ້ວ ຄອບຄົວນາງ ກູດ ສະມາດສ້າງລາຍຮັບຈາກການປູກຜັກຂາຍ ສະເລ່ຍ 50,000,000 ຫາ 60,000,000 ຕໍ່ປີ.



## ສົ່ງເສີມວຽກງານໂພຊະນາການ ຢູ່ບ້ານ ນາລວງ

ໂດຍ: ຈິດຕະພອນ ໄຊຍະຄອນ, ໂພຊະນາການຂັ້ນບ້ານ, ທລຍ ເມືອງໃໝ່, ແຂວງຜົ້ງສາລີ



ໃນວັນທີ 14 ກໍລະກົດ 2023 ຜ່ານມາ, ກຸ່ມໂພຊະນາການ (ກພກ) ບ້ານ ນາລວງ, ເມືອງໃຫ່ມ, ແຂວງຜົ້ງສາລີ ໄດ້ຈັດກອງປະຊຸມໃຫ້ຄວາມຮູ້ທາງດ້ານໂພຊະນາການ ແລະ ສາທິດປຸງແຕ່ງອາຫານເສີມໃຫ້ແກ່ແມ່ຍິງຖືພາ 4 ຄົນ, ແມ່ລູກ ອ່ອນ 3 ຄົນ, ເດັກນ້ອຍ 0-5 ເດືອນ 3 ຄົນ, ເດັນອາຍຸ 6-23 ເດືອນ 10 ຄົນ ແລະ ຜູ້ດູແລເດັກ.

ການສາທິດປຸງແຕ່ງອາຫານເສີມຄັ້ງນີ້ ແມ່ນໄດ້ເຮັດເຂົ້າປຽກສູດໃໝ່ (ສູດທີ 6) ໂດຍມີສ່ວນປະກອບຄື: ຜົງເຂົ້າຈ້າວ, ຜົງຖົ່ວຂຽວ, ນ້ຳມັນພືດ, ໝາກມ່ວງ ແລະ ນ້ຳຕົ້ມຮ້ອນ ໂດຍສະມາຊິກ ກພກ ທີ່ເຂົ້າຮ່ວມທຸກຄົນ ໄດ້ກິນອາຫານທີ່ມີຄຸນຄ່າທາງດ້ານໂພຊະນາການຫຼາຍຢ່າງ ເປັນຕົ້ນແມ່ນ ທາດແປ້ງ, ທາດໂປຼຕີນຈາກຖົ່ວຂຽວ, ທາດໄຂມັນດີ, ທາດວິຕາມິນຈາກໝາກໄມ້ ເພື່ອຊ່ວຍໃຫ້ເດັກໄດ້ຮັບສານອາຫານທີ່ດີ ແລະ ຄົບຖ້ວນ, ມີສຸຂະພາບແຂງແຮງ ພ້ອມທັງເຮັດໃຫ້ຜູ້ເປັນແມ່ໄດ້ຮຽນຮູ້ຂັ້ນຕອນ ແລະ ວິທີການປຸງແຕ່ງອາຫານເພື່ອໄປນຳໃຊ້ໃນຄອບຄົວ.

ນອກຈາກການປຸງແຕ່ງອາຫານເສີມຂອງເດັກ 6-23 ເດືອນແລ້ວຍັງມີການສາທິດປຸງແຕ່ງອາຫານສຳລັບແມ່ຖືພາ ແລະ ແມ່ລູກອອນນຳອີກໂດຍນຳໃຊ້ສູດຈາກໂຄງການ ທລຍ (ສູດອາຫານທີ່1)ປົ່ນໝາກປີໃສ່ໄຂ່ໂດຍມີວັດຖຸດິບປະກອບສ່ວນດັ່ງນີ້ : ໝາກປີ,ໄຂ່,ຫົວຜັກບົວ,ກະທຽມ,ໝາກເຜັດ,ເພື່ອໃຫ້ແມ່ຖືພາ ແລະ ແມ່ລູກອອນໄດ້ຮັບສານອາຫານທາງດ້ານໂພຊະນາການທີ່ດີ,ມີສຸຂະພາບແຂງແຮງ ແລະ ຍັງເຮັດໃຫ້ຜູ້ທີ່ກຳລັງລ້ຽງດ້ວຍນ້ຳນົມແມ່ມີນ້ຳນົມຫຼາຍເພີ່ມອີກ.

# ກິດຈະກຳປັບປຸງຊີວິດການເປັນຢູ່ເພື່ອແກ້ໄຂຄວາມທຸກຍາກ ຢູ່ບ້ານນາກາງ

ໂດຍ ນາງ ທິບພາພອນ ພິມພາ, ປັບປຸງຊີວິດການເປັນຢູ່ ຂັ້ນບ້ານ, ທລຍ ເມືອງໃໝ່, ແຂວງຜົ້ງສາລີ



ບ້ານ ນາກາງ, ກຸ່ມເທດສະບານ ເມືອງໃໝ່ ເປັນບ້ານໜຶ່ງທີ່ນອນໃນ 24 ບ້ານເປົ້າໝາຍຊຸດທີ 1 ຂອງໂຄງການຫຼຸດຜ່ອນຄວາມທຸກຍາກ (ທລຍ) 3 ໄລຍະເພີ່ມທຶນ ຢູ່ເມືອງໃໝ່, ແຂວງຜົ້ງສາລີ. ບ້ານ ນາກາງ ໄດ້ເຂົ້າຮ່ວມປະຕິບັດກິດຈະກຳການຊ່ວຍເຫຼືອຂອງ ໂຄງການ ທລຍ 3 ໄລຍະເພີ່ມທຶນ ມາແຕ່ຕົ້ນປີ 2021 ເປັນຕົ້ນແມ່ນ ກິດຈະກຳປັບປຸງຊີວິດການເປັນຢູ່ ຊຶ່ງໄດ້ສ້າງຕັ້ງ ກຸ່ມຊ່ອຍເຫຼືອກັນແກ້ໄຂຄວາມທຸກຍາກ (ກຊກ) ໄດ້ 5 ກຸ່ມ, ມີສະມາຊິກທັງໝົດ 72 ຄົນ (ຍິງ 60 ຄົນ) ແລະ ໄດ້ຄັດເລືອກເອົາຄະນະກຳມະການບໍລິຫານກອງທຶນ ກຊກ ບ້ານ ຈຳນວນ 5 ທ່ານ ແລະ ໄດ້ຮັບການຝຶກອົບຮົມດ້ານການບັນຊີ ແລະ ການເງິນ ຈາກ ທລຍ ເພື່ອໃຫ້ສາມາດຄຸ້ມຄອງເງິນຕົ້ນທຶນ ແລະ ເງິນຝາກຂອງສະມາຊິກ ໄດ້ຢ່າງມີປະສິດທິພາບ. ສະມາຊິກ ກຊກ ຍັງໄດ້ເຂົ້າຮ່ວມຝຶກອົບຮົມເຕັກນິກການປູກ ແລະ ການລ້ຽງສັດ ກ່ອນທີ່ໄດ້ຮັບສິດໃນການຂໍກູ້ຢືມເງິນຕົ້ນທຶນ.

ທລຍ ໄດ້ສະໜອງເງິນຕົ້ນທຶນ ໃຫ້ ກຊກ ຊຸດທີ 1 ໃນກາງປີ 2021 ແລະ ຊຸດທີ 2 ໃນກາງປີ 2022 ຊຶ່ງເປັນຈຳນວນເງິນທັງໝົດ 147,872,000 ກີບ ແລະ ເງິນຝາກຂອງສະມາຊິກ ກຊກ ມາຮອດເດືອນມິຖຸນາ 2023 ມີຈຳນວນທັງໝົດ 45,200,000 ກີບ. ໃນຮອບວຽນທີ 1 ປີ 2021, ສາມາດປ່ອຍກູ້ໄດ້ 79,000,000 ກີບ ໃຫ້ແກ່ ສະມາຊິກ ກຊກ 28 ຄົນ ເພື່ອນຳໃຊ້ເຂົ້າໃນການລົງທຶນໃສ່ກິດຈະກຳສ້າງລາຍຮັບ ເປັນຕົ້ນແມ່ນຄ້າຂາຍຍ່ອຍ ແລະ ການລ້ຽງສັດນ້ອຍ (ລ້ຽງສັດປີກ ແລະ ລ້ຽງໝູ) ໃນນີ້ ໄດ້ເອົາເງິນຝາກມາປ່ອຍກູ້ຈຳນວນ 16,000,000 ກີບ ຈາກເງິນຝາກ

ທັງໝົດ 20,000,000 ກີບ ໂດຍໄລຍະການກູ້ ແມ່ນ 12 ເດືອນ ໃນອັດຕາດອກເບ້ຍ 1% ຕໍ່ເດືອນ. ໃນຮອບວຽນທີ 1 ຂອງການປ່ອຍກູ້, ສະມາຊິກ ກຊກ ສາມາດສົ່ງຕົ້ນທຶນຄືນ ແລະ ດອກເບ້ຍໄດ້ 100% (9,440,000 ກີບ). ສໍາລັບການປ່ອຍກູ້ໃນຮອບວຽນທີ 2 ແມ່ນ 98,000,000 ກີບ ໃຫ້ແກ່ສະມຊິກ ກຊກ ຈໍານວນ 26 ຄົນ ໃນນີ້ ໄດ້ປ່ອຍກູ້ຈາກເງິນຝາກ 9,000,000 ກີບ ໂດຍໄດ້ນໍາໄປລົງທຶນໃສ່ ກິດຈະກໍາປັບປຸງຊີວິດການເປັນຢູ່ 5 ປະເພດ ຄື: ຕໍ່າຫູກ, ລ້ຽງໄກ່, ລ້ຽງເປັດ, ລ້ຽງໝູ ແລະ ລ້ຽງແບ້ ໃນໄລຍະການກູ້ຢືມ 12 ເດືອນ ແລະ ອັດຕາດອກເບ້ຍ 1% ຕໍ່ເດືອນ. ໃນຮອບວຽນທີ 2 ຂອງການປ່ອຍກູ້, ສະມາຊິກ ກຊກ 4 ຄົນ ສາມາດສົ່ງທຶນກູ້ກ່ອນກໍານົດໄດ້ 100% ແລະ ອີກ 22 ຄົນ ໄດ້ຈ່າຍດອກເບ້ຍ ເປັນປະຈໍາ.

ຜ່ານການຈັດຕັ້ງປະຕິບັດກິດຈະກໍາສ້າງລາຍຮັບໃນໄລຍະຫຼາຍກວ່າ 30 ເດືອນ ເຫັນວ່າ ສະມາຊິກ ກຊກ ບ້ານນາກາງ ມີລາຍຮັບເພີ່ມຂຶ້ນຫຼາຍກວ່າໄລຍະກ່ອນການເຂົ້າຮ່ວມກິດຈະກໍາປັບປຸງຊີວິດການເປັນຢູ່ ໂດຍສະເພາະ ມີລາຍຮັບເພີ່ມຂຶ້ນຈາກການຂາຍສັດ, ຂາຍສິ້ນ ແລະ ຄ້າຂາຍຍ່ອຍ ແລະ ເຮັດໃຫ້ຊີວິດການເປັນຢູ່ຂອງສະມາຊິກ ກຊກ ມີທ່າອ່ຽງດີຂຶ້ນເທື່ອລະກ້າວ



# ການສົ່ງເສີມໂພຊະນາການ ຢູ່ບ້ານກິວວິງວິໄລ, ເມືອງໃໝ່

ໂດຍ: ພອນຄຳ ດວງພູມາ, ໂພຊະນາການຂັ້ນບ້ານ, ທລຍ ເມືອງໃໝ່, ແຂວງຜົ້ງສາລີ

ໃນວັນທີ 21 ກໍລະກົດ 2023 ທີ່ຜ່ານມາ, ກຸ່ມໂພຊະນາການບ້ານກິວວິງວິໄລ, ເມືອງໃໝ່, ແຂວງ ຜົ້ງສາລີ ໄດ້ຈັດກອງປະຊຸມໃຫ້ຄວາມຮູ້ທາງດ້ານໂພຊະນາການ ພ້ອມກັບສາທິດການປຸງແຕ່ງ ອາຫານເສີມໃຫ້ແກ່ແມ່ ແລະ ເດັກ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 94 ຄົນ ໃນນັ້ນມີແມ່ຍິງຖືພາ 6 ຄົນ, ແມ່ລູກອ່ອນ 9 ຄົນ, ເດັກອາຍຸ 0-5 ເດືອນ 9 ຄົນ, ເດັກອາຍຸ 6-23 ເດືອນ 35 ຄົນ, ແມ່ ແລະ ຜູ້ດູແລເດັກ 35 ຄົນ.

ການຈັດກອງປະຊຸມໂພຊະນາການໃນຄັ້ງນີ້ ໄດ້ຕົ້ມເຂົ້າປຽກຕາມສູດທີ 6 ໂດຍມີສ່ວນປະກອບຫຼັກ ຄື: ແປ້ງບົດທີ່ເຮັດມາຈາກເຂົ້າຈ້າວ ຫຼື ເຂົ້າໜຽວ, ແປ້ງຖົ່ວຂຽວ, ໝາກມ່ວງ, ນົມຈືດ ແລະ ນ້ຳມັນພືດ.

ການສາທິດປຸງແຕ່ງອາຫານເສີມໃຫ້ແມ່ ແລະ ເດັກແມ່ນໄດ້ຈັດຕັ້ງປະຕິບັດ 1 ຄັ້ງ ຕໍ່ອາທິດ ຢູ່ບັນດາບ້ານເປົ້າໝາຍຂອງໂຄງການ ທລຍ 3 ໄລຍະເພີ່ມທຶນ ເພື່ອຊ່ວຍເຮັດໃຫ້ເດັກນ້ອຍມີສຸຂະພາບທີ່ແຂງແຮງ, ໄດ້ຮັບທາດອາຫານທີ່ມີຄຸນຄ່າທາງໂພຊະນາການສູງ ແລະ ເປັນການສາທິດວິທີການເຮັດອາຫານເສີມສູດຕ່າງໆ ເພື່ອໃຫ້ຜູ້ເປັນແມ່ນຳໄປແຕ່ງອາຫານໃຫ້ລູກກິນເປັນປົກກະຕິ ໃນຊີວິດປະຈຳວັນ.



# ສ້າງລາຍຮັບຈາກການລ້ຽງສັດ ເພື່ອປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກ

ໂດຍ: ເອີເພີ ປໍສະ, ປັບປຸງຊີວິດການເປັນຢູ່ຂັ້ນບ້ານ, ທລຍ ເມືອງສຳພັນ, ແຂວງຜົ້ງສາລີ



ຄອບຄົວນາງ ດອນ ແມ່ນຄອບຄົວໜຶ່ງທີ່ອາໃສຢູ່ບ້ານມົກພະ, ຂຶ້ນກັບກຸ່ມສະນຳຮະ, ເມືອງສຳພັນ, ແຂວງຜົ້ງສາລີ, ຫ່າງຈາກຕົວເມືອງ 47 ກິໂລແມັດ ຊຶ່ງບ້ານມົກພະ ເປັນບ້ານເປົ້າໝາຍຊຸດທີ 1 ຂອງໂຄງການ ທລຍ 3 ໄລຍະເພີ່ມທຶນ. ຄອບຄົວນາງ ດອນ ມີສະມາຊິກທັງໝົດ 8 ຄົນ, ຍິງ 4 ຄົນ, ເດັກອາຍຸ 1-18 ປີ 3 ຄົນ. ນາງ ດອນ ໄດ້ເຂົ້າເປັນສະມາຊິກກຸ່ມຊ່ວຍເຫຼືອກັນແກ້ໄຂຄວາມທຸກຍາກ (ກຊກ) ໃນທ້າຍປີ 2020 ແລະ ໄດ້ເຂົ້າຮ່ວມກອງປະຊຸມ ກຊກ ແລະ ໄດ້ທ້ອນເງິນກັບກອງທຶນ ກຊກ ເປັນປົກກະຕິ ຈົນຮອດປະຈຸບັນ ຄອບຄົວຂອງລາວ ມີເງິນຝາກສະສົມທັງໝົດ 350,000 ກີບ. ນອກຈາກນັ້ນ ນາງ ດອນ ຍັງໄດ້ຮັບການຝຶກອົບຮົມເຕັກນິກການປູກ-ການລ້ຽງ ຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໂດຍການສະໜັບສະໜູນທຶນຝຶກອົບຮົມຈາກ ໂຄງການ ທລຍ. ພາຍຫຼັງໄດ້ຮັບການຝຶກອົບຮົມແລ້ວ ນາງ ດອນ ໄດ້ອະທິບາຍໃຫ້ສະມາຊິກຄອບຄົວຂອງລາວ ເຂົ້າໃຈເຖິງການສ້າງລາຍຮັບພາຍໃນຄອບຄົວ. ໃນຕົ້ນປີ 2023 ລາວ ໄດ້ກູ້ຢືມເງິນຈາກກອງທຶນ ກຊກ ຈຳນວນ 3,000,000 ກີບ ໃນອັດຕາດອກເບ້ຍ 1 % ຕໍ່ເດືອນ ຊຶ່ງຖືວ່າເປັນການເຂົ້າເຖິງແຫຼ່ງທຶນກູ້ ຄັ້ງທຳອິດຂອງຄອບຄົວລາວ ໂດຍໄດ້ນຳເອົາເງິນຈຳນວນທີ່ໄດ້ກູ້ຢືມ ສົມທົບກັບເງິນທຶນຂອງຄອບຄົວ ໄປຊື້ ໝູພໍ່ພັນ 1 ໂຕ ລາຄາ 1,000,000 ກີບ; ເປັດໃຫຍ່ 30 ໂຕ ລາຄາ 50,000/ໂຕ; ເປັດນ້ອຍ 24 ຄູ່ ລາຄາ 30,000ກີບ/ຄູ່; ໄກ່ແມ່ 4 ໂຕ ລາຄາ 80,000 ກີບ/ໂຕ; ແລະ ໄກ່ພໍ່ພັນ 1 ໂຕ ລາຄາ 80,000 ກີບ/ໂຕ.

ມາຮອດປະຈຸບັນ ຄອບຄົວນາງ ດອນ ສາມາດຂາຍໝູນ້ອຍ ຈຳນວນ 30 ກິໂລກຣາມ ຄິດເປັນເງິນ 3,000,000 ກີບ; ຂາຍເປັດ ຈຳນວນ 46 ກິໂລກຣາມ ຄິດເປັນເງິນ 3,680,000 ກີບ; ຂາຍໄກ່ຈຳນວນ 25 ກິໂລກຣາມ ຄິດເປັນເງິນ 1,875,000 ກີບ; ແລະ ໄດ້ເອົາເປັດ ແລະ ໄກ່ ຈຳນວນ 48 ກິໂລກຣາມ ປຸງແຕ່ງເປັນອາຫານກິນໃນຄອບຄົວ ຄິດເປັນເງິນ 3,840,000 ກີບ.

ຫຼັງຈາກຫັກເງິນຕົ້ນທຶນໃຫ້ກອງທຶນ ກຊກ ຈຳນວນ 3,000,000 ກີບ ຄອບຄົວຂອງລາວ ໄດ້ມີກຳໄລ 9,395,000 ກີບ ແລະ ປະຈຸບັນຍັງມີໝູ ໄວ້ລ້ຽງ 2 ໂຕ, ເປັດໃຫຍ່ 25 ໂຕ, ໄກ່ 19 ໂຕ, ແລະ ເປັດນ້ອຍ 58 ໂຕ.

# ຄອບຄົວຕົວແບບ ໃນການສ້າງລາຍຮັບຈາກການລ້ຽງສັດ

ໂດຍ: ຈັນທີ ສີລິເດດ, ວິຊາການປັບປຸງຊີວິດການເປັນຢູ່ ຂັ້ນບ້ານ, ທລຍ ເມືອງຄຳ, ແຂວງຊຽງຂວາງ



ນາງ ນິດ ແລະ ຄອບຄົວ ອາໃສຢູ່ບ້ານພຽງດ້າງ, ຂຶ້ນກັບກຸ່ມບຸນຖິ່ນ, ເມືອງຄຳ ແຂວງຊຽງຂວາງ ຊຶ່ງບ້ານດັ່ງກ່າວ ຫ່າງຈາກຕົວເມືອງ 84 ກິໂລແມັດ ແລະ ເປັນບ້ານເປົ້າໝາຍຊຸດທີ່ 1 ຂອງໂຄງການ ທລຍ 3 ໄລຍະເພີ່ມທຶນ. ຄອບຄົວນາງ ນິດ ມີສະມາຊິກທັງໝົດ 4 ຄົນ (ຍິງ 2 ຄົນ). ນາງ ນິດ ແລະ ຜົວຂອງລາວ ໄດ້ມີໂອກາດເຂົ້າຮ່ວມຮັບຟັງການແນະນຳກ່ຽວກັບໂຄງການ ທລຍ ໂດຍສະເພາະການສ້າງຕັ້ງກຸ່ມຊ່ວຍເຫຼືອກັນ (ກຊກ) ແລະ ເຮັດໃຫ້ ນາງ ນິດ ແລະ ຜົວ ເຂົ້າໃຈເຖິງຈຸດປະສົງຂອງໂຄງການ ທລຍ ທີ່ຈະສະໜັບສະໜູນຊ່ວຍຄອບຄົວທຸກຍາກພາຍໃນບ້ານ ໃຫ້ຫຼຸດພົ້ນຈາກຄວາມທຸກຍາກ. ຫຼັງຈາກນັ້ນ ນາງ ນິດ ແລະ ຄອບຄົວ ໄດ້ຕົກລົງກັນເຂົ້າເປັນສະມາຊິກ ກຊກ. ນັບແຕ່ຕົ້ນປີ 2021 ເປັນຕົ້ນມາ, ນາງນິດ ໄດ້ເຂົ້າຮ່ວມກອງປະຊຸມ ກຊກ ແລະ ຝາກເງິນກັບກອງທຶນ ກຊກ ຢ່າງເປັນປົກກະຕິ ຊຶ່ງມາຮອດປະຈຸບັນ ນາງ ນິດ ໄດ້ຝາກເງິນກັບກອງທຶນ ກຊກ ທັງໝົດ 355.000 ກີບ.

ນອກຈາກນັ້ນ ນາງ ນິດ ແລະ ຜົວ ຍັງໄດ້ເຂົ້າຮ່ວມຝຶກອົບຮົມເຕັກນິກການປູກ-ການລ້ຽງ ທີ່ຈັດໂດຍໂຄງການ ທລຍ ໂດຍສົມທົບກັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

ຄອບຄົວ ນາງ ນິດ ໄດ້ກູ້ຢືມເງິນຈາກກອງທຶນ ກຊກ ຈຳນວນ 5.000.000 ກີບ ເພື່ອລົງທຶນຊື້ໝູນ້ອຍ ຈຳນວນ 10 ໂຕ ມາລ້ຽງ (ລາຄາໝູນ້ອຍ ໂຕລະ 500.000 - 600.000 ກີບ) ເປັນໄລຍະ 15 - 30 ມື້ ເພື່ອໃຫ້ນ້ຳໜັກເພີ່ມຂຶ້ນ ແລ້ວຂາຍອອກປະມານ 850.000 ກີບ ຕໍ່ໂຕ. ໃນ 1 ປີ ຄອບຄົວ ນາງ ນິດ ໄດ້ຊື້ໝູນ້ອຍເຂົ້າມາລ້ຽງ ແລ້ວຂາຍອອກ 9 ຄັ້ງ ໂດຍໄດ້ກຳໄລທັງໝົດ 20.250.000 ກີບ ຕໍ່ປີ. ນອກຈາກນີ້, ຄອບຄົວ ນາງ ນິດ ຍັງໄດ້ລ້ຽງໄກ່ ໂດຍສາມາດສ້າງລາຍຮັບເຂົ້າສູ່ຄອບຄົວໄດ້ 10.000.000 ກີບ ຕໍ່ປີ, ລວມລາຍຮັບຈາກການລ້ຽງໝູ ແລະ ໄກ່ ແມ່ນ 30.250.0000 ກີບ/ປີ. ການສ້າງລາຍຮັບຈາກການລ້ຽງໝູ ແລະ ໄກ່ ຂອງຄອບຄົວນາງ ນິດ ໄດ້ກາຍເປັນແບບຢ່າງໃຫ້ຄອບຄົວອື່ນ ແລະ ສາມາດເປັນບ່ອນຮຽນຮູ້ພາຍໃນບ້ານພຽງດ້າງ ແລະ ບ້ານໃກ້ຄຽງ.

# ທລຍ ເມືອງຄຳ ເຂົ້າຮ່ວມ ວັນໂພຊະນາການ

ໂດຍ: ບົວສອນ ສີລີວົງ, ພະນັກງານໂພຊະນາການ ທລຍ ເມືອງຄຳ, ແຂວງຊຽງຂວາງ

ໃນຕອນເຊົ້າຂອງວັນທີ 15 ສິງຫາ 2023 ຜ່ານມາ ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ເມືອງຄຳ ໄດ້ເຂົ້າຮ່ວມຈັດວັນໂພຊະນາການ ທີ່ບ້ານແລ້ງ, ເມືອງຄຳ, ແຂວງຊຽງຂວາງ. ການຈັດວັນໂພຊະນາການໃນຄັ້ງນີ້ ໄດ້ໃຫ້ກຽດເປັນປະທານກ່າວເປີດໂດຍ ທ່ານ ວັນນາ ເຮືອງແກ່ນທານ, ກຳມະການພັກເມືອງ, ຮອງເຈົ້າເມືອງ ເມືອງຄຳ ແລະ ມີບັນດາໂຄງການທີ່ນອນໃນແຜນງານໜຶ່ງດຽວທີ່ມີສ່ວນຮ່ວມຂອງຫຼາຍຂະແໜງການ ເພື່ອປັບປຸງວຽກງານໂພຊະນາການ ຢູ່ 4 ແຂວງພາກເໜືອ ທີ່ໄດ້ຮັບການສະໜັບສະໜູນຈາກທະນາຄານໂລກ ເຂົ້າຮ່ວມ ປະກອບມີ 5 ໂຄງການ ຄື: ໂຄງການກອງທຶນຫຼຸດຜ່ອນຄວາມທຸກຍາກ 3 ໄລຍະເພີ່ມທຶນ, ໂຄງການຫຼຸດຜ່ອນຄວາມທຸກຍາກ ແລະ ຂາດໂພຊະນາການໃນເຂດຊົນນະບົດ, ໂຄງການເຂົ້າເຖິງການບໍລິການສຸຂະພາບ ແລະ ໂພຊະນາການ, ໂຄງການຂະຫຍາຍນ້ຳປະປາຊຸມຊົນ ແລະ ໂຄງການກອງທຶນຮ່ວມມືສາກົນເພື່ອການສຶກສາ ໄລຍະ 3. ການຈັດວັນໂພຊະນາການ ໃນຄັ້ງນີ້ ມີຜູ້ເຂົ້າຮ່ວມທັງໝົດ 98 ຄົນ, ຍິງ 76 ຄົນ.

ຈຸດປະສົງ ຂອງການຈັດວັນໂພຊະນາການໃນຄັ້ງນີ້ ແມ່ນເພື່ອເປັນການຊຸກຍູ້ ແລະ ສົ່ງເສີມໃຫ້ຊຸມຊົນ ໄດ້ເຂົ້າເຖິງຂໍ້ມູນ-ຂ່າວສານດ້ານໂພຊະນາການ ພ້ອມທັງ ສ້າງຄວາມເຂົ້າໃຈໃຫ້ຜູ້ທີ່ໄດ້ຮັບຜົນປະໂຫຍດ ກໍ່ຄືພໍ່ແມ່ປະຊາຊົນພາຍໃນບ້ານໄດ້ເຂົ້າໃຈກ່ຽວກັບການກິນຢູ່ທີ່ມີໂພຊະນາການ ແລະ ການເຮັດວຽກຮ່ວມກັນກັບຫຼາຍຂະແໜງການ ຢູ່ພາຍໃນບ້ານຂອງຕົນ.

ໃນພິທີ ນາຍບ້ານ ບ້ານແລ້ງ ໄດ້ລາຍງານໂດຍຫຍໍ້ ບັນດາກິດຈະກຳ ຂອງບັນດາໂຄງການທີ່ໃຫ້ການສະໜັບສະໜູນພາຍໃນບ້ານ ເຊັ່ນ: ໂຄງການກອງທຶນຫຼຸດຜ່ອນຄວາມທຸກຍາກ ໄດ້ສ້າງຕັ້ງກຸ່ມຊ່ວຍເຫຼືອກັນ ມີສະມາຊິກທັງໝົດ 73 ຄົນ, ກຸ່ມໂພຊະນາການບ້ານ ມີຊະມາຊິກທັງໝົດ 37 ຄົນ, ໄດ້ມີການເຄື່ອນໄຫວ ຝາກເງິນເປັນປະຈຳທຸກໆເດືອນ ມາຮອດປະຈຸບັນໄດ້ມີເງິນຝາກຂອງກຸ່ມທັງໝົດ 14.180.000 ກີບ, ໄດ້ຮັບເງິນທຶນສະໜັບສະໜູນຈາກໂຄງການ ທລຍ ເປັນເງິນທັງໝົດ 234.545.600 ກີບ ໃນນັ້ນ 224.000.000 ກີບ ສຳລັບກິດຈະກຳປັບປຸງຊີວິດການເປັນຢູ່ ແລະ 10.545.600 ກີບ ສຳລັບກິດຈະກຳໂພຊະນາການ. ນອກຈາກນັ້ນ, ຍັງໄດ້ຮັບເງິນສະໜັບສະໜູນ ຈາກໂຄງການຫຼຸດຜ່ອນຄວາມທຸກຍາກ ແລະ ຂາດໂພຊະນາການໃນເຂດຊົນນະບົດ ຈຳນວນໜຶ່ງ ແລະ ໄດ້ເຄື່ອນໄຫວ ຕິດຕາມການຊັ່ງນ້ຳໜັກ, ແທກລວງສູງຂອງເດັກ ເປັນປະຈຳທຸກໆເດືອນ.

ໃນງານວັນໂພຊະນາການດັ່ງກ່າວ ໂຄງການ ທລຍ ເມືອງຄຳ ໄດ້ມີການວາງສະແດງຮູບພາບການເຄື່ອນໄຫວວຽກງານສົ່ງເສີມດ້ານໂພຊະນາການ ຢູ່ບ້ານເປົ້າໝາຍຂອງໂຄງການ ພ້ອມທັງສາທິດການປຸງແຕ່ງອາຫານເສີມສຳລັບ ເດັກອາຍຸ 6-23 ເດືອນ ໃຫ້ຜູ້ເຂົ້າຮ່ວມໄດ້ຊີມ ແລະ ໃຫ້ຄວາມຮູ້ ກ່ຽວກັບບັນດາສູດອາຫານສຳລັບເດັກຂອງໂຄງການ ທລຍ ເພື່ອໃຫ້ຜູ້ເຂົ້າຮ່ວມ ໄດ້ນຳໄປໝູນໃຊ້ປຸງແຕ່ງໃຫ້ລູກຂອງຕົນໃນຄົວເຮືອນຂອງຕົນ.



# ບ້ານ ສິບຫ້າງ ກັບກິດຈະກຳສ້າງລາຍຮັບ ເພື່ອແກ້ໄຂຄວາມທຸກຍາກ

ໂດຍ: ຈັນທີ ສີລີເດດ, ປັບປຸງຊີວິດການເປັນຢູ່ຂັ້ນບ້ານ, ທລຍ ເມືອງຄຳ



ບ້ານ ສິບຫ້າງ ເປັນບ້ານຊົນເຜົ່າລາວ, ຕັ້ງຫ່າງຈາກເທດສະບານເມືອງຄຳ, ແຂວງຊຽງຂວາງ 92 ກິໂລແມັດ. ບ້ານ ສິບຫ້າງ ປະກອບມີ 30 ຄົວເຮືອນ, ທຸກ 2 ຄົວເຮືອນ, ປະກອບມີພົນລະເມືອງທັງໝົດ 202 ຄົນ, ຍິງ 103 ຄົນ. ອາຊີບຕົ້ນຕໍຂອງປະຊາຊົນພາຍໃນບ້ານ ແມ່ນເຮັດໄຮ່ ແລະ ຖືເອົາການປູກພືດ, ລ້ຽງສັດນ້ອຍ ແລະ ສັດໃຫຍ່ ເປັນອາຊີບສຳຮອງ. ບ້ານ ສິບຫ້າງ ເປັນບ້ານເປົ້າໝາຍຊູດທີ 1 ຂອງໂຄງການກອງທຶນຫຼຸດຜ່ອນຄວາມທຸກຍາກ(ທລຍ) 3 ໄລຍະເພີ່ມທຶນ.

ໜຶ່ງໃນບັນດາກິດຈະກຳຂອງໂຄງການ ທລຍ ທີ່ໃຫ້ການສະໜັບສະໜູນບ້ານດັ່ງກ່າວ ແມ່ນການສ້າງຕັ້ງກຸ່ມຊ່ວຍເຫຼືອກັນແກ້ໄຂຄວາມທຸກຍາກ (ກຊກ) ຈຳນວນ 3 ກຸ່ມ, ມີສະມາຊິກທັງໝົດ 29 ຄົນ, ຍິງ 26 ຄົນ. ພາຍຫຼັງ ການສ້າງຕັ້ງກຸ່ມ ກຊກ ແລະ ການຄັດເລືອກເອົາ ຄະນະກຳມະການ ບໍລິຫານກອງທຶນ ກຊກ ຂັ້ນບ້ານແລ້ວ ໂຄງການ ຍັງໄດ້ສະໜອງການຝຶກອົບຮົມການເງິນການບັນຊີກອງທຶນ ກຊກ ກ່ອນທີ່ ທລຍ ໄດ້ມອບເງິນຕົ້ນທຶນໃຫ້ກຸ່ມ ກຊກ ທັງສອງຊຸດ ຄື ຊຸດທີ 1 ຈຳນວນ 36.432.000 ກີບ ໃນວັນທີ 14 ມິຖຸນາ 2021 ແລະ ຊຸດທີ 2 ຈຳນວນ 31.200.000 ກີບ ໃນວັນທີ 3 ມີນາ 2023 ລວມຈຳນວນເງິນທັງໝົດ 67.632.000 ກີບ. ແລະ ໄດ້ສ້າງຕັ້ງກຸ່ມ ຜະລິດຂຶ້ນໄດ້ 2 ກຸ່ມ ຄື: ກຸ່ມລ້ຽງໝູ ໄດ້ຮັບການສະໜອງທຶນສຳລັບກຸ່ມຜະລິດ ຈຳນວນ 92.190.000 ກີບ ເພື່ອເຄື່ອນໄຫວເຂົ້າໃນການເຮັດກິດຈະກຳຂອງກຸ່ມ.

ນອກຈາກເງິນຕົ້ນທຶນແລ້ວ, ສະມາຊິກ ກຊກ ທັງໝົດຍັງໄດ້ກຳນົດເງິນຝາກປະຈຳເດືອນ 5,000 ກີບ/ເດືອນ. ມາຮອດປະຈຸບັນ ກອງທຶນ ກຊກ ບ້ານ ສິບຫ້າງ ມີເງິນຝາກຂອງສະມາຊິກ ສະສົມທັງໝົດ 9.340.000ກີບ. ສະມາຊິກ ກຊກ 11 ຄົນ ໄດ້ກູ້ຢືມເງິນຈາກກອງທຶນ ກຊກ ຈຳນວນ 63.000.000 ກີບ ເພື່ອໄປລົງທຶນໃສ່ກິດຈະກຳສ້າງລາຍຮັບເປັນຕົ້ນແມ່ນ ລ້ຽງໝູ, ລ້ຽງປາ ແລະ ຕຳຫູກ ພ້ອມທັງ ໄດ້ນຳໃຊ້ເຕັກນິກໃນການລ້ຽງສັດ ເຊັ່ນ: ການສັກຢາປ້ອງກັນພະຍາດສັດ, ສ້າງຄອກສັດຕາມເຕັກນິກວິຊາການ, ເຮັດອາຫານໝັກໃຫ້ສັດຕາມສູດອາຫານທີ່ມີໃນທ້ອງຖິ່ນ ເພື່ອຫຼຸດຕົ້ນທຶນຊື້ອາຫານສັດ.

ຜ່ານການດຳເນີນກິດຈະກຳເປັນເວລາ 12 ເດືອນ, ສະມາຊິກ ກຊກ ຜູ້ທີ່ໄດ້ກູ້ຢືມເງິນໄປເຮັດກິດຈະກຳສ້າງລາຍຮັບດັ່ງທີ່ກ່າວມານັ້ນ ສາມາດມີກຳໄລຈາກການຂາຍສັດ ແລະ ຕຳຫູກ ທັງໝົດ 65.631.000 ກີບ. ພວກເຂົາເຈົ້າສາມາດສົ່ງຕົ້ນທຶນ ແລະ ດອກເບ້ຍຄືນໃຫ້ກອງທຶນ ກຊກ. ລາຍຮັບດັ່ງກ່າວ ແມ່ນຫຼາຍກວ່າເມື່ອທຽບໃສ່ເມື່ອກ່ອນ ຊຶ່ງໄດ້ປະກອບສ່ວນເຮັດໃຫ້ແຕ່ລະຄອບຄົວເຂົາເຈົ້າ ມີຊີວິດການເປັນຢູ່ທີ່ດີຂຶ້ນເທື່ອລະກ້າວ.

## ສຳເລັດການສຳຫຼວດ ອອກແບບ ກິດຈະກຳຍ່ອຍ ພື້ນຖານໂຄງລ່າງຂະໜາດນ້ອຍ ຢູ່ເມືອງຄຳ

ໂດຍ: ຂັນໄຊ ແພວນວົງສິດ, ວິຊາການຈັດຊື້-ຈັດຈ້າງ, ທລຍ ເມືອງຄຳ

ກິດຈະກຳຍ່ອຍ ພື້ນຖານໂຄງລ່າງຂະໜາດນ້ອຍ ແມ່ນໜຶ່ງ ໃນ 3 ກິດຈະກຳຫຼັກ ທີ່ສະໜັບສະໜູນໂດຍ ໂຄງການກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) 3 ໄລຍະເພີ່ມທຶນ ໃຫ້ແກ່ບັນດາບ້ານເປົ້າໝາຍຂອງໂຄງການ. ໃນປີ 2023 ທລຍ ເມືອງຄຳ ໄດ້ສຳເລັດການສຳຫຼວດອອກແບບໂຄງການຍ່ອຍ ຢູ່ 29 ບ້ານເປົ້າໝາຍຊຸດທີ 2 ໂດຍການສຳຫຼວດອອກແບບໂຄງການຍ່ອຍດັ່ງກ່າວ ໄດ້ເລີ່ມແຕ່ວັນທີ 2 ກໍລະກົດ 2023 ຫາ ວັນທີ 16 ສິງຫາ 2023 ໂດຍທາງທີມງານວິຊາການ ທລຍ, ຫ້ອງການທີ່ກ່ຽວຂ້ອງຂອງເມືອງ, ພະນັກງານ ທລຍ ຂັ້ນບ້ານ ແລະ ອົງການປົກຄອງບ້ານ ພ້ອມດ້ວຍພໍ່ແມ່ປະຊາຊົນ ໃນບັນດາບ້ານເປົ້າໝາຍ ເຂົ້າຮ່ວມທັງໝົດ 3.236 ຄົນ (ຍິງ 2.043 ຄົນ), ຊົນເຜົ່າ 1.365 ຄົນ. ບັນດາ 29 ໂຄງການຍ່ອຍປະກອບດ້ວຍ:

- ກິດຈະກຳ ສ້ອມແປງຄອງເໝືອງ 5 ແຫ່ງ, 8 ຈຸດ, ຄວາມຍາວ 11.5 ກິໂລແມັດ;
- ກິດຈະກຳ ສ້ອມແປງຝາຍນ້ຳລົ້ນ 1 ແຫ່ງ, ຄວາມຍາວ 20 ກິໂລແມັດ;
- ກິດຈະກຳ ສ້ອມແປງນ້ຳລິນເພື່ອຮັບໃຊ້ການຜະລິດກະສິກຳ 5 ແຫ່ງ, ຄວາມຍາວ 16.8 ກິໂລແມັດ;
- ກິດຈະກຳ ສ້ອມແປງທາງເຂົ້າເຂດທຳການຜະລິດ 8 ແຫ່ງ 11 ເສັ້ນ, ຄວາມຍາວ 44.7 ກິໂລແມັດ;
- ກິດຈະກຳ ລ້ອມຮົ້ວໜາມໝາກຈັບອ້ອມສະຖານລ້ຽງສັດ 10 ຈຸດ ຢູ່ 4 ບ້ານ, ນຳໃຊ້ໜາມໝາກຈັບ 10.204 ກໍ້;
- ກິດຈະກຳ ກໍ່ສ້າງເຮືອນຕ່ຳຫູກ 2 ຫຼັງ, ຂະໜາດ 8x13 ແມັດ;
- ກິດຈະກຳ ກໍ່ສ້າງຂົວເບຕົງ 1 ແຫ່ງ, ຄວາມຍາວ 22 ແມັດ;
- ກິດຈະກຳ ຕໍ່ທໍ່ເອົານ້ຳໃສ່ນາ 2 ແຫ່ງ, ຄວາມຍາວ 11 ແມັດ;
- ກິດຈະກຳ ສ້ອມແປງຂົວອູ່ 1 ແຫ່ງ, ຄວາມຍາວ 130 ແມັດ

